# ບົດທີ 20

# ເລື່ອງເປໂຕ ແລະ ໂກເນລີໂອ ທີ່ເມືອງກາຍຊາເລຍ




*ເປໂຕເຫັນນິມິດທີ່ເຂົ້າໃຈຍາກ. ໃນບົດຮຽນນີ້ ເຮົາຈະຮຽນເລື່ອງເຫດຜົນຈາກນິມິດນັ້ນ. ຍ້ອນການນິມິດນັ້ນ ຂ່າວປະເສີດແຜ່ອອກໄປເຖິງອີກເມືອງໜຶ່ງທີ່ເປັນສູນກາງ ຂອງການປົກຄອງຂອງຈັກກະພັດໂລມຄື: ກາຍຊາເລຍ*

**1** ກ. ໃນບົດທີ 19 ນັ້ນເຮົາສຶກສາເລື່ອງທີ່ຟີລິບແລະໂຊໂລໄປເຖິງສອງແຂວງໃດ?

________________________ ແລະ ________________________

ຂ. ໃນບົດຮຽນນີ້ເຮົາຈະຮຽນເລື່ອງອີກຜູ້ໜຶ່ງທີ່ປ່າວປະກາດພະທຳໃນສອງແຂວງນັ້ນຄືໃຜ? (ກຈກ 9:32)________________________________________

**2** ທັງຟີລິບ ທັງໂປໂລ ແລະເປໂຕໄປປ່າວປະກາດໃນແຂວງຢູດາແລະຊາມາເລຍ.

ກ. ຟີລິບປ່າວປະກາດຈົນມາເຖິງເມືອງໃດ? (ກຈກ 8:40) ____________________

ຂ. ພີ່ນ້ອງຄຶດສະຕຽນພາໂຊໂລລົງໄປເຖິງເມືອງໃດ? (ກຈກ 9:30) ________________

ຄ. ໂກເນລີໂອຕ້ອນຮັບເປໂຕໃນເມືອງໃດ? (ກຈກ 10:24) ____________________

**3** ກ. ມີສາມຄົນໃດທີ່ເຂົ້າໄປໃນແຂວງຢູດາແລະຊາມາເລຍ?

________________ ________________ ແລະ ________________

ຂ. ສຸດທ້າຍ ທັງສາມຄົນນັ້ນມາເຖິງເມືອງໃດ? ________________________

ຄ. ໃຫ້ທ່ານເປີດເບິ່ງແຜນທີ່ຂອງປະເທດປາແລັດສະຕິນຢູ່ໜ້າຕໍ່ໄປ.
ກາຍຊາເລຍຢູ່ໃນແຂວງໃດ? ________________________________

ງ. ຢູ່ແຄມທະເລໃດ? ________________________________________

# ແຜນທີ່ປະເທດປາແລັດສະຕິນ




**4** ໃນສະໄໝພວກອັກຄະສາວົກ ກາຍຊາເລຍເປັນເມືອງຫຼວງຂອງແຂວງຢູດາ. ໃນເລື່ອງນີ້ປາກົດວ່າມີບັນຫາຢູ່ ເຫັນວ່າເມືອງກາຍຊາເລຍຢູ່ໃນແຂວງໃດ? ______________________



**5** ບັນຫານີ້ເກີດຂຶ້ນເພາະໃນປະເທດປາແລັດສະຕິນມີແຂວງສອງລະບົບ. ໃນເວລານັ້ນ ປາແລັດສະຕິນຂຶ້ນຢູ່ກັບຈັກກະພັດໂລມ. ຈັກກະພັດໂລມແບ່ງແຂວງຕາມການປົກຄອງຂອງເຂົາ ແຕ່ປະຊາຊົນຢິວແບ່ງແຂວງຕາມທີ່ເຈົ້ານາຍຢິວເຄີຍ ແບ່ງມາ.

ກ. ຈັກກະພັດໂລມແບ່ງແຂວງຢ່າງໃດ? (ເລືອກ)

_______ ຕາມປະຫວັດສາດ ແລະພູມສາດ

_______ ທາງການປົກຄອງໂລມ

ຂ. ປະຊາຊົນຢິວເຄີຍແບ່ງໄປຢ່າງໃດ? ______________

__________________________________________

**6** 5 _ແຂວງທີ່ເຮໂລດຜູ້ຍິ່ງໃຫຍ່ປົກຄອງນັບເປັນ 5 ແຂວງຕາມແຂວງຊາດຢິວ. ເມື່ອພະເຢຊູຍັງເປັນເດັກເຮໂລດຜູ້ ຍິ່ງໃຫຍ່ຕາຍແລ້ວເຂົາແຍກການປົກຄອງລະຫວ່າງລູກຊາຍຂອງເພິ່ນທັງ 3 ຄົນຄື: ອາເຄລາວ ອັນຕິປາ ແລະ ຟີລິບ.

ກ. ລູກຄົນໃດປົກຄອງໃນແຂວງຢູດາແລະຊາມາເລຍ? ___________________________

ຂ. ຄົນໃດປົກຄອງແຂວງຄາລີເລ ແລະເປີເລຍ? _______________________________

ຄ. ຄົນໃດປົກຄອງໃນແຂວງອີຕູລາຍ? ______________________________________

**7** ແຕ່ເຮໂລດອາເຄລາວປົກຄອງບໍ່ດີ ດັ່ງນັ້ນ ຈັກກະພັດໂລມຍຶດອຳນາດແລະຂັບໄລ່ໃຫ້ເພິ່ນອອກນອກ ແລ້ວຕັ້ງ ແຂວງໂລມໂດຍກົງຊຶ່ງມີຄົນໂລມມາປົກຄອງ. ສອງແຂວງຢິວເລີຍກາຍເປັນແຂວງດຽວທາງການຈັກກະພັດໂລມ.

ກ. ສອງແຂວງນັ້ນຄືແຂວງໃດ? __________________ ແລະ ______________________

ຂ. ຈັກກະພັດໂລມປະຕິວເມືອງຂອງແຂວງເກົ່າທັງສອງແຂວງມາຕັ້ງເມືອງຫຼວງໃຫ້ຖືກກັບຊື່ຂອງຈັກກະພັດໂລມກາຍຊາ. ເມືອງຫຼວງຂອງແຂວງໃໝ່ນັ້ນຢູ່ແຄມຝັ່ງທະເລຄືເມືອງໃດ?

_______________________________________________________________

**8** ແຂວງໃໝ່ນັ້ນມີຊື່ເກົ່າວ່າແຂວງຢູດາ.

ກ. ແຂວງຢູດາທີ່ເປັນທາງການຈັກກະພັດໂລມ ປະກອບດ້ວຍສອງແຂວງໃດທີ່ເຄີຍເປັນແຂວງທາງປະຫວັດສາດຢິວ? _____________________ ແລະ ______________________

ຂ. ພວກຈັກກະພັດໂລມຕັ້ງສູນກາງປົກຄອງແຂວງໃໝ່ນັ້ນຢູ່ໃສ? ___________________

**9** ກ. ເມືອງຫຼວງຂອງແຂວງທາງການປົກຄອງຈັກກະພັດໂລມ ເຄີຍຢູ່ໃນແຂວງເກົ່າຄືແຂວງໃດ?

_______________________________________________________________

ຂ. ແຕ່ເຂົາໃສ່ຊື່ແຂວງໃໝ່ຕາມແຂວງຢິວເກົ່າຄືແຂວງໃດ? _______________________

**10** ຕອນນີ້ທ່ານຈະເຂົ້າໃຈໄດ້ວ່າ ກາຍຊາເລຍເປັນເມືອງຫຼວງຂອງແຂວງຢູດາ.

ກ. ຖ້າເຮົາວ່າ ເມືອງກາຍຊາເລຍຢູ່ໃນແຂວງຊາມາເລຍ ເຮົາອ້າງເຖິງແຂວງຢິວເກົ່າຫຼືແຂວງໂລມ (ໃໝ່)?______________________________________________

ຂ. ຖ້າຈະວ່າ ເມືອງກາຍຊາເລຍເປັນເມືອງຫຼວງຂອງແຂວງຢູດາ ເຮົາອ້າງເຖິງແຂວງທາງລະບົບຢິວ ຫຼືລະບົບ ໂລມ?________________________________________

**11** ກ. ແຂວງຢູດາທາງການຈັກກະພັດໂລມປະກອບດ້ວຍສອງແຂວງໃດຕາມປະຫວັດສາດຢິວ?

___________________________ ແລະ ____________________________

ຂ. ກາຍຊາເລຍເປັນເມືອງຫຼວງຂອງແຂວງໃດທາງການໂລມ? ___________________

ຄ. ກາຍຊາເລຍຢູ່ໃນເຂດທີ່ເຄີຍເປັນແຂວງໃດຕາມລະບົບຊາດຢິວ? _______________

**12** ເຮໂລດຜູ້ຍິ່ງໃຫຍ່ສ້າງເມືອງກາຍຊາເລຍໄວ້ເພື່ອໃຫ້ກຽດແກ່ເຈົ້າຈັກກະພັດໂລມໃນສະໄໝນັ້ນ ຈຶ່ງຕິດຊື່ຕາມຊື່ກາຍຊາ. ກາຍຊາອົງນັ້ນເປັນເຈົ້າຈັກກະພັດໂລມໃນສະໄໝທີ່ພະເຢຊູເກີດ ຄື ກາຍຊາໂອຄຸໂຕ ຫຼືກາຍຊາຕິເບລີໂອ?____________________________________

**13** ມາເຖິງສະໄໝກິດຈະການຂອງພວກອັກຄະສາວົກນີ້ ທັງເຮໂລດຜູ້ຍິ່ງໃຫຍ່ແລະບຸດທັງສາມຄົນຕາຍແລ້ວ. ມີເຮໂລດ ອີກສອງຄົນທີ່ຂຶ້ນແທນຄືເຮໂລດອາຄະລິປາທີໜຶ່ງ ແລະທີສອງ. ພວກເຂົາເປັນຊາດຢິວທີ່ຮ່ວມກັບເຈົ້ານາຍຈັກກະພັດ ໂລມໃນການປົກຄອງຊາດ. ເຂົາອາໃສຢູ່ໃນລາຊະວັງທີ່ເມືອງຫຼວງຂອງແຂວງທາງການໂລມ. ລາຊະວັງຂອງເຮໂລດ ອາຄະລິປາຢູ່ໃນເມືອງໃດ? ____________________________________________________

**14** ກາຍຊາເລຍເປັນສູນກາງສຳຄັນໃນການປົກຄອງປາແລັດສະຕິນ. ກະສັດຢິວຄືເຮໂລດອາຄະລິປາທັງສອງບ່ອນນັ້ນ. ຜູ້ ປົກຄອງຂອງເຈົ້າຈັກກະພັດໂລມກໍຢູ່ທີ່ນັ້ນ ມີສະໜາມກິລາໃຫຍ່ ແລະມີວັດໃຫຍ່ທີ່ເຕັມໄປດ້ວຍຮູບຂອງເຈົ້າຈັກກະ ພັດ ຕ່າງ ໆ ເພື່ອໃຫ້ຄົນບູຊາ ມີຄ້າຍປົກຄອງກອງທັບຈັກກະພັດໂລມ. ມີທ່າເຮືອເພື່ອຄວາມສະດວກໃນການປົກຄອງ ແລະ ການຄ້າຂາຍໄປຕ່າງປະເທດ. ໃຫ້ທ່ານຂີດ √ ຂ້າງຄວາມທີ່ບັນລະຍາຍເລື່ອງເມືອງກາຍຊາເລຍ

ກ. ______ ເຈົ້າຈັກກະພັດກາຍຊາເປັນຜູ້ສ້າງ

ຂ. ______ ສ້າງໄວ້ເພື່ອໃຫ້ກຽດແກ່ກາຍຊາຕິເບລີໂອ

ຄ. ______ ເຮໂລດຜູ້ຍິ່ງໃຫຍ່ເປັນຜູ້ສ້າງໄວ້

ງ. ______ ສ້າງໄວ້ເພື່ອໃຫ້ກຽດແກ່ກາຍຊາໂອຄຸໂຕ

ຈ. ______ ມີວັດເພື່ອບູຊາພະຜູ້ເປັນເຈົ້າ

ສ. ______ ມີວັດເພື່ອບູຊາເຈົ້າຈັກກະພັດໂລມ

ຊ. ______ ວັດນັ້ນບໍ່ມີຮູບຂ້າງໃນ

ຍ. ______ ເປັນທີ່ປະຈຳຂອງຜູ້ປົກຄອງໂລມ ແລະພວກກະສັດເຮໂລດ

ດ. ______ ມີທະຫານໂລມບໍ່ຫຼາຍ

ຕ. ______ ມີສະໜາມກິລາໃຫຍ່

ຖ. ______ ມີທ່າເຮືອ

ທ. ______ ເປັນທີ່ປົກຄອງກອງທັບໂລມທົ່ວແຂວງຢູດາ

**15** ໃຫ້ທ່ານຂຽນຄຳບັນລະຍາຍເລື່ອງເມືອງກາຍຊາເລຍ.

________________________________________________________________

________________________________________________________________

________________________________________________________________

________________________________________________________________

**16** ການປ່າວປະກາດຂ່າວປະເສີດໃນເມືອງກາຍຊາເລຍ ເປັນຈຸດສຳຄັນປະການໜຶ່ງໃນການເຜີຍແຜ່ພະທຳອອກໄປ. ດັ່ງນັ້ນເຮົາຈະຮຽນຢ່າງລະອຽດກ່ຽວກັບ ຟີລິບ ໂປໂລ ແລະເປໂຕ ຊຶ່ງເປັນຜູ້ປະກາດພະທຳໃນເມືອງນັ້ນ. ໃຫ້ອ່ານ ກ ຈກ 21:8-9

ກ. ໃນສາມຄົນນັ້ນ ແມ່ນຄົນໃດທີ່ມີເຮືອນໃນເມືອງກາຍຊາເລຍ? ________________

ຂ. ຟີລິບຮັບໜ້າທີ່ປະກາດຫຍັງ? ________________________________________

ຄ. ມີລູກສາວຈັກຄົນ? ______________________________________________

ງ. ລູກສາວນັ້ນເຮັດຫຍັງ? ____________________________________________

ຈ. ໃຜໄປເຂົ້າເຮືອນຂອງຟີລິບ? ________________________________________

**17** ມີຜູ້ປະກາດຂ່າວປະເສີດຜູ້ສຳຄັນຄົນໜຶ່ງທີ່ອາໄສຢູ່ໃນເມືອງກາຍຊາເລຍ. ຕໍ່ໄປກາຍຊາເລຍນັ້ນ ກາຍເປັນສູນກາງ ຂອງການປ່າວປະກາດ ແລະຜູ້ປະກາດນັ້ນອາດຈະຫາໂອກາດພັກຜ່ອນໃນເຮືອນຂອງທ່ານນັ້ນ. ຜູ້ປະກາດທີ່ອາໄສຢູ່ ໃນກາຍຊາເລຍຊື່ຫຍັງ? ______________

**18** ຟີລິບເປັນຂ້າໃຊ້ຂອງພະເຈົ້າທີ່ປະຈຳໃນເມືອງກາຍຊາເລຍ. ຫຼັງຈາກປະກາດພະທຳໃນທົ່ວແຂວງຊາມາເລຍ ແລະ ຢູ ດາ ເປໂຕກໍມາເຖິງກາຍຊາເລຍດ້ວຍ.

ກ. ໃນ ກຈກ 8:1 ເຫັນວ່າເມື່ອເກີດມີການຂົ່ມເຫງທີ່ໃຫຍ່ໃນກຸງເຢລູຊາເລັມ ພວກສາວົກທັງເປໂຕພ້ອມຍັງຢູ່ໃນ ກຸງ ໃດ? ________________________________________

ຂ. ໃນ ກຈກ 9:32-33 ເປໂຕທ່ຽວໄປມາຫຼາຍບ່ອນ ເລີຍໃຫ້ຄົນທີ່ຊື່ ໄອເນດີພະຍາດໃນເມືອງໃດ? ____________________________________________________

ຄ. ເພິ່ນຍົກໂດລະກາຄືນມາໃນເມືອງໃດ? (ກຈກ 9:38) ______________________

ງ. ໃນ ກຈກ 10:24 ໂກເນລີໂອຕ້ອນຮັບເປໂຕໃນເມືອງໃດ? ____________________

**19** ໃຫ້ທ່ານເປີດເບິ່ງແຜນທີ່ປາແລັດສະຕິນຢູ່ໜ້າ 197 ອີກແລະຊີ້ບອກແຂວງ (ຕາມລະບົບຍືວ) ຂອງແຕ່ລະບ່ອນນັ້ນ?

ກ. ເປໂຕອອກຈາກເຢລູຊາເລັມ (ກຈກ 8:1) ຄືແຂວງໃດ? ____________________

ຂ. ໃຫ້ໄອເນດີພະຍາດໃນລິດເດ (ກຈກ 9:32) ຄືແຂວງໃດ? __________________

ຄ. ຍົກໂດລະກາຄືນໃນຢົບເປ (ກຈກ 9:38) ຄືແຂວງໃດ? _____________________

ງ. ໂກເນລີໂອຕ້ອນຮັບເພິ່ນໃນກາຍຊາເລຍ (ກຈກ 10:24) ແຂວງໃດ? _______________

**20** ໃຫ້ທ່ານແຕ້ມລູກສອນແລະ ໝາຍທາງທີ່ເປໂຕເດີນ ໃສ່ໄວ້ໃນແຜນທີ່ຂ້າງຂວານີ້




**21** ເຊັ່ນດຽວກັນກັບຟີລິບແລະໂປໂລ,ເປໂຕມາເຖິງນະຄອນກາຍຊາເລຍການທີ່ເປໂຕເຂົ້າເຮືອນຂອງໂກເນລີໂອເປັນຫຼັກ ສຳຄັນໃນປະຫວັດສາດຄຣິດສະຕະຈັກເພາະຄົນໂລມນັ້ນເຂົ້າເຊື່ອໃນພະເຢຊູທັງຄອບຄົວໃຫ້ອ່ານກຈກ10:1

ກ. ຄົນທີ່ຮັບເຊື່ອໃນພະເຢຊູນັ້ນຊື່ຫຍັງ? ___________________________________

ຂ. ເພິ່ນມີອາຊີບຫຍັງ? ____________________________________________

ຄ. ເພິ່ນຮັບໜ້າທີ່ໃນເມືອງໃດ? ________________________________________

**22** ມາເຖິງນີ້ ມີແຕ່ຊາດຢິວກັບຊາດຊາມາເລຍຮັບບັບຕິສະມາ. ສ່ວນໄທເອທີໂອເປຍທີ່ຮັບບັບຕິສະມາຈາກຟີລິບເປັນກໍ ລະນີພິເສດ ເພາະຄິດວ່າເພິ່ນເຂົ້າສາດສະໜາຢິວມາກ່ອນ ແຕ່ຝ່າຍໂກເນລີໂອເປັນເທື່ອທຳອິດທີ່ຄົນຕ່າງປະເທດ ແລະ ຕ່າງສາດສະໜາມາເຊື່ອ.

ກ. ໃນ ກຈກ 11:1 ເຂົາເອີ້ນຄົນທີ່ບໍ່ເປັນຢິວວ່າຢ່າງໃດ? _________________________

ຂ. ໃນ ກຈກ 11:3 ເອີ້ນເຂົາວ່າຢ່າງໃດ? ___________________________________

ຄ. ໃນ ກຈກ 11:2 ພວກຝ່າຍໃດຕິຕຽນເປໂຕ? ______________________________

**23** ຄຳວ່າ "ພິທີຕັດ" ອ້າງເຖິງການຕັດໜັງຫຸ້ມອະໄວຍະວະເພດຂອງຜູ້ຊາຍ. ເປັນພິທີຊຶ່ງພະເຈົ້າສັ່ງໄວ້ກັບຊາດຢິວ ວ່າ ເປັນສັນຍາລັກຂອງຄຳສັນຍາລະຫວ່າງພະເຈົ້າກັບຊາດຢິວ. ໃຫ້ອ່ານປະຖົມມະການ 17:9-14

ກ. ແມ່ນຊາດຢິວຫຼືຄົນຕ່າງປະເທດທີ່ຖືພິທີຕັດ? ______________________________

ຂ. ໂກເນລີໂອຖືກພິທີຕັດບໍ່? ___________________________________________

**24** ກາຍຊາເລຍເປັນສູນກາງຂອງການປົກຄອງຈັກກະພັດໂລມໃນປະເທດປາແລັດສະຕິນ. ຄືເປັນສູນກາງຂອງພວກບໍ່ຮັບ ພິທີຕັດ.

ກ. ຕາມ ກຈກ 10:28 ທີ່ຄົນຊາດຢິວຈະເຂົ້າຮ່ວມສະມາຄົມກັບຄົນຕ່າງຊາດ ເປັນການຕ້ອງເຮັດຫຍັງ? ______________________________________________________

ຂ. ແມ່ນໃຜທີ່ສະແດງໃຫ້ເປໂຕຮູ້ວ່າບໍ່ຄວນຖືຄົນໃດວ່າບໍ່ສະອາດ? __________________

**25** ພະເຈົ້າສະແດງໃຫ້ເປໂຕຮູ້ເລື່ອງນັ້ນໂດຍການນິມິດ. ໃຫ້ອ່ານ ກຈກ 10:11-16

ກ. ຕາມພະບັນຍັດທີ່ໂມເຊຮັບມາ ສັດທີ່ເປໂຕເຫັນໃນຜ້າຜືນນັ້ນ ເປັນຂອງທີ່ຕ້ອງຫ້າມ. ເປໂຕເຫັນສັດນັ້ນແລະຖື ວ່າເປັນອາຫານຂອງຄົນໃດ? ____________________________

ຂ. ແຕ່ເກີດມີພະສຸລະສຽງທີ່ສັ່ງໃຫ້ເຮັດຫຍັງ? ________________________________

ຄ. ແຕ່ທີວທີ ເປໂຕບໍ່ຍອມກິນເພາະສິ່ງທີ່ຫ້າມນັ້ນ ບໍ່ເຄີຍກິນຈັກເທື່ອ. ໃນ ກຈກ 10:15 ພະເຈົ້າສັ່ງຊ້ຳອີກວ່າ ຢ່າງໃດ? __________________________________________

ງ. ຄືພະເຈົ້າບໍ່ໃຫ້ເປໂຕຖືວ່າຊາດໃດເປັນທີ່ຕ້ອງຫ້າມ? __________________________

**26** ກ. ເປໂຕຢູ່ໃນເມືອງໃດ ເວລາເຫັນການນິມິດນັ້ນ? ____________________________

ຂ. ໃຫ້ທ່ານເປີດເບິ່ງແຜນທີ່ປະເທດປະແລັດສະຕິນຢູ່ໜ້າ 197 ອີກ. ເມືອງໃດຕໍ່ໄປນີ້ຢູ່ຝັ່ງທະເລ? (ເລືອກ ສອງຂໍ້)

ລິດດາ ຢົບເປ ກາຍຊາເລຍ ເຢລູຊາເລັມ

**27** ເປໂຕຍັງພິຈາລະນາເລື່ອງສິ່ງທີ່ເຫັນໃນນິມິດນັ້ນ ພໍດີມີສາມຄົນຫຍັບມາເຖິງປະຕູເຮືອນທີ່ເພິ່ນພັກ. ເຂົາມາຈາກກາຍ ຊາເລຍ ມີນາຍຮ້ອຍທະຫານໂລມທີ່ສັ່ງເຂົາມາ.

ກ. ນາຍຮ້ອຍນັ້ນຊື່ຫຍັງ? ________________________________________________

ຂ. ເປັນຊາດໃດ? ______________________________________________________

ຄ. ພະເຈົ້າຫາກໍ່ສະແດງໃຫ້ເປໂຕຮູ້ຢ່າງໃດ? (ກຈກ 10:28 ປາຍຂໍ້ນັ້ນ) ______________

__________________________________________________________________

ງ. ເປໂຕຢູ່ໃນເມືອງໃດຈຶ່ງເຫັນນິມິດນີ້? ____________________________________

**28** ເປໂຕສັງເກດວ່າ ພະເຈົ້າເປັນຜູ້ຈັດທຳເຫດການນີ້ໄວ້ ຈຶ່ງອອກຈາກຢົບເປໄປກາຍຊາເລຍ. ຄັນເຂົ້າໄປໃນເຮືອນ ຂອງ ໂກເນລີໂອແລ້ວ ເພິ່ນເທດສະໜາຕາມທີ່ທ່ານຮຽນມາແລ້ວໃນ ກຈກ 10:34-43. ຕໍ່ໄປທັງໂກເນລີໂອແລະ ຄອບຄົວ ຮັບເຊື່ອໃນພະເຢຊູ. ໃຫ້ອ່ານ ກຈກ 10:44-48

ກ. ເຊັ່ນດຽວກັນກັບໄຊໂລ ເຂົາເຕັມໄປດ້ວຍຫຍັງ? ____________________________

ຂ. ທັງຄອບຄົວຮັບສິນຫຍັງ? __________________________________________

**29** ນີ້ແຫຼະ ເປັນເທື່ອທຳອິດທີ່ຄົນຕ່າງຊາດຮັບບັບຕິສະມາ. ຜູ້ທີ່ມີຄວາມຮູ້ເລື່ອງພະຄຳພີຄິດວ່າໄທເອທີໂອເປຍທີ່ຮັບບັບຕິ ສະມາຈາກຟີລິບເຂົ້າສາດສະໜາຢິວກ່ອນ. ໃນສະໄໝພະຄຳພີໃໝ່ມີຫຼາຍຄົນທີ່ບໍ່ເກີດເປັນຄົນຢິວ ແຕ່ເຂົາເຊື່ອ ເລື່ອງ ພະຜູ້ເປັນເຈົ້າຕາມໃນພະຄຳພີເດີມ ເຂົາຈຶ່ງຮັບພິທີຕັດແລ້ວມານະມັດສະການພະເຈົ້າໃນວິຫານຢູ່ກຸງເຢລູຊາ ເລັມ. ໃນ ກຈກ 8:27-28 ມີຫຼັກຖານສອງປະການທີ່ສະແດງວ່າໄທເອທີໂອເປຍນັ້ນ ເຂົ້າສາດສະໜາຢິວແລ້ວຄື:

ກ. ເພິ່ນມາທີ່ກຸງເຢລູຊາເລັມເພື່ອຫຍັງ? ____________________________________

ຂ. ເພິ່ນອ່ານໜັງສືໃດຢູ່? ________________________________________________

**30** ດັ່ງນັ້ນເຮົາອາດຈະຖືໄດ້ວ່າ ລິດສະໜາຍຄົນຕ່າງຊາດເລີ້ມຕົ້ນໃນເຮືອນຂອງໂກເນລີໂອໃນວັນນັ້ນ ເປັນເທື່ອທຳອິດທີ່ ຄົນຕ່າງຊາດມາເຊື່ອໃນພະເຢຊູ. ເຂົາກໍຮັບພະວິນຍານບໍລິສຸດແລະຮັບບັບຕິສະມາດ້ວຍ.

ກ. ແມ່ນຜູ້ປະກາດພະທຳຄົນໃດ ເປັນຄົນທຳອິດທີ່ກ່າວຂ່າວປະເສີດໃຫ້ຊາດຢິວຟັງ? _____

ຂ. ໃນເມືອງໃດ? ____________________________________________

ຄ. ແມ່ນຜູ້ປ່າວປະກາດພະທຳຄົນໃດ ເປັນຄົນທຳອິດທີ່ກ່າວຂ່າວປະເສີດໃຫ້ຄົນຕ່າງຊາດຟັງ?

____________________________________________

ງ. ໃນເມືອງໃດ? ____________________________________________

**31** ກ. ແມ່ນໃຜທີ່ມອບຂໍກະແຈແຫ່ງແຜ່ນດິນສະຫວັນໄວ້ໃຫ້ເປໂຕ? (ມທ 16:19) ________

ຂ. ມອບໃນເມືອງໃດ? (ມທ 16:14) ________________________________

**32** ກາຍຊາເລຍຟີລິບປອຍກັບກາຍຊາເລຍບໍ່ແມ່ນບ່ອນດຽວກັນ!

ກ. ໃນສອງເມືອງນັ້ນ ເມືອງໃດຢູ່ໃນແຂວງອິຕູລາຍ? ______________________

ຂ. ເມືອງໃດຢູ່ໃນແຂວງຊາມາເລຍ? ________________________________

ຄ. ເມືອງໃດຢູ່ແຄມຝັ່ງທະເລເມລິແຕລາເນ? ____________________________

ງ. ເມືອງໃດຢູ່ໃກ້ພູເຮໂມນ? ____________________________________

ຈ. ເມືອງໃດທີ່ພະເຢຊູທຳນວາຍວ່າ ເປໂຕຈະເປີດປະຕູແຜ່ນດິນສະຫວັນ? __________

ສ. ເມືອງໃດທີ່ເປໂຕເປີດປະຕູໃຫ້ຄົນຕ່າງຊາດເຂົ້າແຜ່ນດິນສະຫວັນ? ____________

**33** ກ. ຕົວອັກສອນໃດໝາຍກາຍຊາເລຍ ຟີລິບປອຍໄວ້?

____________________________________

ຂ. ຢູ່ແຂວງໃດ? __________________________

ຄ.ໃກ້ພູໃດ? ____________________________

ງ. ອັກສອນໃດໝາຍກາຍຊາເລຍໄວ້? ____________

ຈ. ຢູ່ແຂວງໃດ? (ຕາມຢິວ) ___________________

ສ. ໃກ້ທະເລໃດ? __________________________




**34** ຖ້າເຮົາຈະເຂົ້າໃຈດີເລື່ອງພູມສາດໃນສະໄໝພະຄຳພີໃໝ່ ເຮົາຕ້ອງຮູ້ແຍກລະຫວ່າງກາຍຊາເລຍກັບກາຍຊາເລຍ ຟີ ລິບປອຍ. ຄວາມໃດຕໍ່ໄປນີ້ທີ່ອ້າງເຖິງກາຍຊາເລຍຟີລິບປອຍ ໃຫ້ຂຽນຕົວ “ພ” ໄວ້. ຖ້າອ້າງເຖິງກາຍຊາເລຍ ໃຫ້ຂຽນ ຕົວ “ກ”. ຖ້າຖືກທັງສອງໃຫ້ຂຽນທັງສອງ ຖ້າບໍ່ຖືກທັງສອງກໍບໍ່ຕ້ອງຂຽນຫຍັງເລີຍ.

ກ. _____ ເຮໂລດຍິ່ງໃຫຍ່ເປັນຜູ້ສ້າງ ຂ. _____ ຢູ່ໃນແຂວງຊາມາເລຍຕາມລະບົບຢິວ

ຄ. _____ ຢູ່ໃນແຂວງອິຕູລາຍ ງ. _____ ຢູ່ແຄມຝັ່ງທະເລເມລິແຕລາເນ

ຈ. _____ ຢູ່ໃກ້ພູເຮໂມນ
ສ. _____ ຢູ່ໃນປະເທດປາແລັດສະຕິນ
ຊ. _____ ຢູ່ໃນປະເທດເອຢິບ
ຍ. _____ ບ່ອນຢູ່ອາໄສຂອງປີລາດ
ດ. _____ ພະເຢຊູທຳນວາຍວ່າ ເປໂຕຈະເປີດປະຕູແຜ່ນດິນສະຫວັນ
ຕ. _____ ເປໂຕເປີດແຜ່ນດິນສະຫວັນໃຫ້ຄົນຕ່າງຊາດເຂົ້າ
ຖ. _____ ເປໂຕແນະນຳໃຫ້ໂກເນລີໂອຮັບເຊື່ອໃນພະເຢຊູ
ທ. _____ ເມືອງຫຼວງຂອງແຂວງຢູດາ

**35** ກ. ກາຍຊາເລຍ ຢູ່ໃນແຂວງໃດ? (ຕາມລະບົບຍິວ) ____________________________
ຂ. ກາຍຊາເລຍພີລິບປອຍເດ? ____________________________________________

**36** ກ. ການລາຍງານຂອງພະຄຳພີຖືກຕ້ອງຢູ່ສະເໝີ. ນັກປະຫວັດສາດຈາກສະໄໝນັ້ນ ລາຍງານວ່າ ຄ້າຍທະຫານໂລມ ທີ່ໃຫຍ່ຢູ່ໃນເມືອງກາຍຊາເລຍ. ກຈກ 10:1 ຢືນຢັນເລື່ອງນີ້ໂດຍບອກວ່າ ໂກເນລີໂອເປັນທະຫານຕຳແໜ່ງໃດ __________________________
ຂ. ເພິ່ນປົກຄອງກອງທະຫານທີ່ເອີ້ນວ່າກອງໃດ? ______________________________

**37** ເບິ່ງຄືວ່າທ່າເຮືອໃນກາຍຊາເລຍເປັນອັນທີ່ເຂົາໃຊ້ຫຼາຍອາຈານໂປໂລເດີນທາງໄປປ່າວປະກາດເປັນ3ຮອບ
ກ. ເທື່ອທຳອິດໂປໂລຂຶ້ນບົກຢູ່ໃສ? (ກຈກ 14:26) __________________________
ຂ. ເທື່ອທີສອງເດ? (ກຈກ 18:22) _________________________________________
ຄ. ເທື່ອທີສາມລົງໃສ? (ກຈກ 21:8) _____________________________________

**38** ເຮໂລດຜູ້ຍິ່ງໃຫຍ່ສ້າງທ່າເຮືອຊຶ່ງສະຫງ່າງາມແທ້. ມີຮູບແບບອັດສະຈັນທີ່ຈອດເຮືອໄດ້ຫຼາຍລຳ. ໃນສາມຮອບທີ່ອາ ຈານໂປໂລເດີນທາງໄປປ່າວປະກາດເພິ່ນຂຶ້ນຢູ່ທ່າກາຍຊາເລຍເທື່ອໃດແດ່? _____________________________________________________

**39** ຫຼັງຈາກເດີນທາງໄປປ່າວປະກາດທັງ 3 ຮອບນັ້ນ ມີຄົນຍິວທີ່ຮ່ວມຄິດຈະຂ້າໂປໂລໃນກຸງເຢລູຊາເລັມ. ເພື່ອຈະອາຣັກ ຂາໂປໂລບໍ່ໃຫ້ເຂົາຂ້າ ທະຫານໂລມນຳໄປສົ່ງເມືອງໃດ? (ກຈກ 23:23) _____________________________________________________

**40** ກ. ໃນຄາວທີ່ໂປໂລເປັນນັກໂທດຢູ່ກາຍຊາເລຍ ເພິ່ນຢູ່ຕໍ່ໜ້າຜູ້ປົກຄອງສອງຄົນ. ໃຫ້ທ່ານຈົດຊື່ເຂົາທັງສອງ. (ກຈກ 24:27) ____________________ ແລະ _______________
ຂ. ຕາມຂໍ້ນັ້ນ ໂປໂລຖືກຂັງໄວ້ຢ່າງນ້ອຍຈັກປີ? ______________________________
ຄ. ໂປໂລຢູ່ຕໍ່ໜ້າກະສັດອາຄະລິປາທີສອງໃນເມືອງໃດ? (ກຈກ 25:13-14) ___________

**41** ຕອນນັ້ນ ເຮໂລດຜູ້ຍິ່ງໃຫຍ່ກັບລູກທັງສາມຕາຍໄປແລ້ວ. ມີອີກສອງອົງຂຶ້ນມາແທນ ທັງສອງພໍ່ກັບລູກນັ້ນມີຊື່ດຽວກັນ ຄື:ອັກຄະລິປາ
ກ. ອົງໃດຂັງເປໂຕໄວ້ໃນຄຸກ? (ກຈກ ບົດ 12) ______________________________
ຂ. ອົງໃດຕັດສິນໂປໂລ? ______________________________________________

**42** ພະທຳກິດຈະການ ລາຍງານເລື່ອງປະຫວັດຂອງອາຄະລິປາທັງສອງ.

ກ. ຫຼັງຈາກ ອາຄະລິປາທີ ໜຶ່ງຂັງເປໂຕໄວ້ໃນກຸງເຢລູຊາເລັມ ເພິ່ນລົງໄປອາໄສຢູ່ໃສ? (ກຈກ 12:19)________________________________

ຂ. ໃນ ກຈກ 12:21-23 ເພິ່ນເປັນຢ່າງໃດ? ____________________

ຄ. ອາຄະລິປາທີໜຶ່ງນັ້ນເປັນພໍ່ຂອງໃຜ? ____________________

ງ. ອາຄະລິປາທີ່ເປັນລູກນັ້ນ ຕັດສິນໃຜ? ____________________

**43** ໃຫ້ທ່ານອ່ານ ກຈກ 12:23 ອີກ.
ຂ້າງຂວານີ້ມີຮູບໜັງສືມ້ວນທີ່ນັກປະຫວັດສາດໂຢສີຟັດ ລາຍງານເລື່ອງຄວາມຕາຍຂອງອາຄະລິປາທີໜຶ່ງ. ໂຢສີຟັດລາຍງານຢ່າງຖືກຕ້ອງກັບລາຍງານໃນພະທຳກິດຈະການບໍ່? ____________________




**44** ໃຫ້ທວນຄືນເລື່ອງຄອບຄົວເຮໂລດກ່ອນ.

ກ. ເຮໂລດອົງໃດປົກຄອງໃນເວລາພະເຢຊູກຳເນີດ? ____________________

ຂ. ເພິ່ນມີລູກສາມຄົນໃດທີ່ປົກຄອງໃນສະໄໝຊີວິດຂອງພະເຢຊູ?
____________ ____________ ແລະ ____________

ຄ. ເຮໂລດອົງໃດປົກຄອງໃນສະໄໝ ກິດຈະການ 1-12? ____________________

ງ. ເຮໂລດອົງໃດປົກຄອງຫຼັງຈາກ ກຈກ 12 ທີ່ຕັດສິນໂປໂລ? ____________________

**45** ການລາຍງານຂອງລູກາໃນພະທຳກິດຈະການຄືຖືກຕ້ອງແທ້ ທີ່ເພິ່ນບັນລະຍາຍເລື່ອງເມືອງໃຫຍ່ຂອງຈັກກະພັດໂລມ ໃນປະເທດປາແລັດສະຕິນ, ທັງລາຍງານເລື່ອງຜູ້ປົກຄອງຊາດໂລມ ແລະກະສັດຢິວໃນເມືອງນັ້ນ.

ກ. ໂປໂລແກ້ຄະດີຕໍ່ໜ້າຜູ້ປົກຄອງຊາດໂລມສອງຄົນໃດ? __________ ແລະ __________

ຂ. ໂປໂລແກ້ຄະດີຕໍ່ໜ້າເຮໂລດໃດ? ____________________

ຄ. ເຮໂລດອົງໃດທີ່ໜອນກິນຈົນຕາຍ? ____________________

ງ. ເຫດການເຫຼົ່ານີ້ ເກີດຂຶ້ນໃນເມືອງໃດໝົດ? ____________________

**46** ກ. ຕາມລະບົບປົກຄອງໂລມ ກາຍຊາເລຍຢູ່ແຂວງໃດ? ____________________

ຂ. ຕາມລະບົບຢິວແມ່ນແຂວງໃດ? ____________________

ຄ. ສອງແຂວງໃດຕາມລະບົບຢິວ ເຂົ້າຮວມກັນເປັນແຂວງດຽວໃນລະບົບໂລມ?
____________________ ແລະ ____________________

**47** ໂປໂລຖືກຂັງໄວ້ໃນຄຸກຢູ່ກາຍຊາເລຍຢ່າງນ້ອຍສອງປີຈຶ່ງຖືກສົ່ງໄປກຸງໂລມ. ໃນ ກຈກ 27:1 ທີ່ມີຄຳຂຽນວ່າ "ພວກ ເຮົາເດີນທາງເຮືອ" ກໍເບິ່ງຄືວ່າຜູ້ລາຍງານໄປດ້ວຍ.

ແມ່ນໃຜໄປກັບໂປໂລ? ____________________________________________

**48** ພະທຳກິດຈະການແລະລູກາລາຍງານເລື່ອງປະຫວັດຄຼິດສະຕະຈັກ ແລະປະຫວັດສາດອີກດ້ວຍຈຶ່ງເປັນຕາໄວ້ໃຈໄດ້ ທັງສອງດ້ານ. ເພິ່ນຮູ້ດີເລື່ອງການປ່າວປະກາດພະທຳຂອງອາຈານໂປໂລ. ທີ່ເພິ່ນຍົກຄວາມ "ພວກເຮົາ" ໃນ ກຈກ 27:1 ສະແດງວ່າຢ່າງໃດ?

____________________________________________

*ຢ່າລືມບົດເສັງ!*

**ຄຳຕອບ:**

**1** *ກ. ຢູດາ ແລະ ຊາມາເລຍ ຂ. ເປໂຕ*

**2** *ກ. ກາຍຊາເລຍ ຂ. ກາຍຊາເລຍ ຄ. ກາຍຊາເລຍ*

**3** *ກ. ຟີລິບ ໂປໂລ ແລະ ເປໂຕ ຂ. ກາຍຊາເລຍ ຄ. ຊາມາເລຍ ງ. ເມລິແຕລາເນ*

**4** *ຊາມາເລຍ*

**5** *ກ. ຕາມການປົກຄອງໂລມ ຂ. ຕາມປະຫວັດສາດແລະພູມສາດ*

**6** *ກ. ອາເຄລາວ ຂ. ອັນຕິປາ ຄ. ຟີລິບ*

**7** *ກ. ຢູດາແລະຊາມາເລຍ ຂ. ກາຍຊາເລຍ*

**8** *ກ. ຢູດາແລະຊາມາເລຍ ຂ. ກາຍຊາເລຍ*

**9** *ກ. ຊາມາເລຍ ຂ. ຢູດາ*

**10** *ກ. ແຂວງຢິວ ຂ. ໂລມ*

**11** *ກ. ຢູດາ ແລະ ຊາມາເລຍ ຂ. ຢູດາ ຄ. ຊາມາເລຍ*

**12** *ກາຍຊາໂອຄຸໂຕ*

**13** *ກາຍຊາເລຍ*

**14** *ຄ ງ ສ ຍ ຕ ຖ ທ ຖືກ*

**15** *(ບໍ່ມີຄຳຕອບຕາຍຕົວ ຈະໃຫ້ອ່ານໃນປະຊຸມໃຫ້ໝູ່ຟັງ)*

**16** *ກ. ຟີລິບ ຂ. ປະກາດຂ່າວປະເສີດ ຄ. 3 ງ. ປະກາດພະທຳ ຈ. ໂປໂລ*

**17** *ຟີລິບ*

**18** *ກ. ເຢລູຊາເລັມ ຂ. ລິດດາ ຄ. ຢົບເປ ງ. ກາຍຊາເລຍ*

**19** *ກ. ຢູດາ ຂ. ຢູດາ ຄ. ຢູດາ ງ. ຊາມາເລຍ (ທາງການຂອງຊາວຢິວ)*

**20** *(ຈາກເຢລູຊາເລັມໄປລິດດາ ຈາກລິດດາໄປຢົບເປ ຈາກຢົບເປໄປກາຍຊາເລຍ)*

**21** *ກ. ໂກເນລີໂອ ຂ. ນາຍທະຫານໂລມ ຄ. ກາຍຊາເລຍ*

**22** *ກ. ພວກຕ່າງຊາດ ຂ. ພວກບໍ່ຮັບພິທີຕັດ ຄ. ຝ່າຍພິທີຕັດ*

**23** *ກ. ຊາດຢິວ ຂ. ບໍ່*

**24** *ກ. ຕ້ອງຫ້າມ ຂ. ພະເຈົ້າສະແດງ*

**ຄຳຕອບ (ຕໍ່):**

**25** *ກ. ຄົນຕ່າງຊາດ ຂ. ຂ້າກິນ*
*ຄ. ສິ່ງທີ່ພະເຈົ້າຊົງຊຳລະແລ້ວ ຝ່າຍທ່ານຢ່າຖືເປັນຂອງຕ້ອງຫ້າມ. ງ. ຄົນຕ່າງຊາດ*

**26** *ກ. ຢົບເປ ຂ. ກາຍຊາເລຍ ຢົບເປ*

**27** *ກ. ໂກເນລີໂອ ຂ. ຕ່າງຊາດ (ຊາດໂລມກໍໄດ້)*
*ຄ. ບໍ່ຄວນຖືຄົນໜຶ່ງຄົນໃດວ່າເປັນຄົນຕ້ອງຫ້າມ ຫຼືບໍ່ສະອາດ ງ. ຢົບເປ*

**28** *ກ. ພະວິນຍານບໍລິສຸດ ຂ. ບັບຕິສະມາ*

**29** *ກ. ເພື່ອນະມັດສະການ ຂ. ພະທຳເອຊາຢາ*

**30** *ກ. ເປໂຕ ຂ. ເຢລູຊາເລັມ ຄ. ເປໂຕ ງ. ກາຍຊາເລຍ*

**31** *ກ. ພະເຢຊູ ຂ. ກາຍຊາເລຍຟີລິບປອຍ*

**32** *ກ. ກາຍຊາເລຍຟີລິບປອຍ ຂ. ກາຍຊາເລຍ ຄ. ກາຍຊາເລຍ*
*ງ. ກາຍຊາເລນຟີລິບປອຍ ຈ. ກາຍຊາເລຍຟີລິບປອຍ ສ. ກາຍຊາເລຍ*

**33** *ກ. ອັກສອນ ຟ ງ. ອັກສອນ ກ ຂ. ອິຕູລາຍ ຈ. ຊາມາເລຍ ຄ. ພູເຮໂມນ*
*ສ. ເນລີແຕລາເນ*

**34** *ກ. ກ ຈ. ຟ ດ. ຟ ຂ. ກ ສ. ຟ ແລະ ກ ຕ. ກ ຄ. ຟ*
*ຊ. (ບໍ່ມີ) ຖ. ກ ງ. ກ ຍ. ກ ທ. ກ*

**35** *ກ. ຊາມາເລຍ ຂ. ອີຕາເລຍ*

**36** *ກ. ນາຍຮ້ອຍ ຂ.ອັນຕິໂອເຂັຍ*

**37** *ກ. ອັນຕີໂອເຂຍ ຂ. ກາຍຊາເລຍ ຄ. ກາຍຊາເລຍ*

**38** *ສອງ ແລະ ສາມ*

**39** *ກາຍຊາເລຍ*

**40** *ກ. ໂປກີໂອເຟຊະໂຕ ແລະ ເຟລິກ ຂ. ສອງ ຄ. ກາຍຊາເລຍ*

**41** *ກ. ອາຄະລິປາທີໜຶ່ງ (ພໍ່) ຂ. ອາຄະລິປາທີສອງ (ລູກ)*

**42** *ກ. ກາຍຊາເລຍ ຂ. ຕົວໜອນກັດກິນຮ່າງກາຍຈົນຕາຍ ຄ. ອາຄະລິປາທີສອງ*
*ງ. ໂປໂລ*

**43** *ຖືກ*

**44** *ກ. ເຮໂລດຜູ້ຍິ່ງໃຫຍ່ ຂ. ອາເຄລາວ ອັນຕິປາ ແລະ ຟີລິບ ຄ. ອາຄະລິປາທີໜຶ່ງ*
*ງ. ອາຄະລິປາທີສອງ*

**45** *ກ. ເຟລິກ ແລະ ໂປກີໂອເຟຊະໂຕ ຂ. ອາຄະລິປາທີສອງ ຄ. ອາຄະລິປາທີໜຶ່ງ*
*ງ. ກາຍຊາເລຍ*

**46** *ກ. ຢູດາ ຂ. ຊາມາເລຍ ຄ. ຢູດາ ແລະ ຊາມາເລຍ*

**47** *ລູກາ*

**48** *ສະແດງວ່າເພິ່ນໄປນຳໂປໂລດ້ວຍ.*